ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 22/ນຍ

ນະຄອນຫຼວງວຽງຈັນ, ວັນທີ 02.02.05

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການປະກາດໃຊ້ທຳມະນູນປົກຄອງສົງລາວ (ສະບັບປັບປຸງໃໝ່)

---------------------

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ
- ອີງຕາມມະຕິຂອງກອງປະຊຸມໃຫຍ່ ຜູ້ແທນພະສົງທົ່ວປະເທດເທື່ອທີ V ຄັ້ງວັນທີ 10 12/6/2004.
- ອີງຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ຄັ້ງວັນທີ 28-30/12/2004;
- ອີງຕາມໃບສະເໜີຂອງ ສຳນັກງານອົງການແນວລາວສ້າງຊາດ ສະບັບເລກທີ 014/ສນຊ, ລົງວັນທີ 20 ມັງກອນ 2005.

**ນາຍົກລັດຖະມົນຕີ ອອກດຳລັດ :**

ມາດຕາ1 : ປະກາດໃຊ້ທຳມະນູນປົກຄອງສົງລາວ ສະບັບປັບປຸງໃໝ່ ( ພ.ສ.2547) ຢ່າງເປັນທາງການ.

ມາດຕາ2 : ມອບໃຫ້ອົງການພຸດທະສາສະໜາສຳພັນລາວ ຈັດຕັ້ງເຜີຍແຜ່ ຂະຫຍາຍ ແລະ ປະຕິບັດທຳມະນູນປົກຄອງສົງລາວສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ປະກົດຜົນເປັນຈິງ.

ມາດຕາ3 : ສູນກາງແນວລາວສ້າງຊາດ, ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ4 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 182/ສນຍ, ລົງວັນທີ 7 ກັນຍາ 1998.

**ນາຍົກລັດຖະມົນຕີ**

ບຸນຍັງ ວໍລະຈິດ